ສາລະບານ


ມະຕິຕົກລົງ ........ 3

ລັດຖະດຳລັດ ........ 4

ກົດໝາຍ ວ່າດ້ວຍພັນທະປ້ອງກັນຊາດ ........ 5

ພາກທີ I ບົດບັນຍັດທົ່ວໄປ ........ 5

ມາດຕາ 1. ຈຸດປະສົງ ........ 5

ມາດຕາ 2. ພັນທະປ້ອງກັນຊາດ ........ 5

ພາກທີ II ພັນທະປ້ອງກັນຊາດໃນຍາມສະຫງົບ ........ 5

ໝວດທີ I ທະຫານພັນທະ ........ 5

ມາດຕາ 3. ເງື່ອນໄຂການເປັນທະຫານພັນທະ ........ 5

ມາດຕາ 4. ການຂຶ້ນບັນຊີ ........ 6

ມາດຕາ 5. ການກຳນົດຈຳນວນພົນ ........ 6

ມາດຕາ 6. ການສະເໜີຕົວ ........ 6

ມາດຕາ 7. ການຄັດເລືອກເອົາທະຫານພັນທະ ........ 6

ມາດຕາ 8. ເງື່ອນໄຂທີ່ພາໃຫ້ໂຈະການເປັນທະຫານພັນທະ ........ 6

ມາດຕາ 9. ເງື່ອນໄຂທີ່ພາໃຫ້ຍົກເວັ້ນການເປັນທະຫານພັນທະ ........ 6

ມາດຕາ 10. ກຳນົດເວລາເປັນທະຫານພັນທະ ........ 7

ມາດຕາ 11. ມາດຕະຖານ ແລະ ໜ້າທີ່ຂອງທະຫານພັນທະ ........ 7

ມາດຕາ 12. ການລາພັກ ........ 7

ມາດຕາ 13. ການສຳເລັດໜ້າທີ່ ........ 7

ມາດຕາ 14. ການສະໝັກເປັນທະຫານປະຈຳການ ........ 7

ມາດຕາ 15. ພັນທະຂອງຜູ້ທີ່ສຳເລັດໜ້າທີ່ເປັນທະຫານພັນທະ ........ 7

ໝວດທີ II ກຳລັງສຳຮອງ ........ 8

ມາດຕາ 16. ກຳລັງສຳຮອງ ........ 8

ມາດຕາ 17. ປະເພດກຳລັງສຳຮອງ ........ 8

ມາດຕາ 18. ການຝຶກແອບກຳລັງສຳຮອງ ........ 8

ມາດຕາ 19. ໜ້າທີ່ຂອງກຳລັງສຳຮອງ ........ 8

ໝວດທີ III ກອງຫລອນ ........ 9

ມາດຕາ 20. ກອງຫລອນ ........ 9

ມາດຕາ 21. ມາດຕະຖານ ແລະ ໜ້າທີ່ຂອງກອງຫລອນ ........ 9

ໝວດທີ IV ກຳລັງປ້ອງກັນຕົວ ........ 9

ມາດຕາ 22. ກຳລັງປ້ອງກັນຕົວ ........ 9

ມາດຕາ 23. ມາດຕະຖານ ແລະ ໜ້າທີ່ຂອງກຳລັງປ້ອງກັນຕົວ ........ 9

ພາກທີ III ການລະດົມພົນໃນຍາມສຸກເສີນ ........ 10

ມາດຕາ 24. ການລະດົມພົນ ........................................................................................................10
ມາດຕາ 25. ການລະດົມພາຫະນະ ແລະ ວັດຖຸປັດໃຈ ....................................................................10
ມາດຕາ 26. ການສິ້ນສຸດການລະດົມພົນ........................................................................................10
ພາກທີ IV ນະໂຍບາຍ..................................................................................................................10
ມາດຕາ 27. ນະໂຍບາຍຕໍ່ທະຫານພັນທະໃນເວລາປະຕິບັດໜ້າທີ່ ...........................................................10
ມາດຕາ 28. ນະໂຍບາຍຕໍ່ຜູ້ສຳເລັດໜ້າທີ່ເປັນທະຫານພັນທະ ..............................................................11
ມາດຕາ 29. ນະໂຍບາຍຕໍ່ກອງຫລອນ ແລະ ກຳລັງປ້ອງກັນຕົວ..............................................................11
ມາດຕາ 30. ນະໂຍບາຍຕໍ່ກຳລັງທີ່ຖືກລະດົມ ......................................................................................11
ພາກທີ V ມາດຕະການຕໍ່ຜູ້ລະເມີດ ..............................................................................................12
ມາດຕາ 31. ການຫລົບຫລີກຈາກທະຫານພັນທະ.................................................................................12
ມາດຕາ 32. ການຊຸກເຊື່ອງ ຫລື ປິດບັງ.........................................................................................12
ມາດຕາ 33. ການໜີຈາກການເປັນທະຫານພັນທະ...............................................................................12
ພາກທີ VI ບົດບັນຍັດສຸດທ້າຍ........................................................................................................12
ມາດຕາ 34. ການຈັດຕັ້ງປະຕິບັດ......................................................................................................12
ມາດຕາ 35. ຜົນສັກສິດ...................................................................................................................12

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 02/ສພຊ

# ມະຕິຕົກລົງ

## ຂອງສະພາແຫ່ງຊາດ

## <u>ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ</u>

ກ່ຽວກັບການຮັບຮອງເອົາກົດໝາຍ ວ່າດ້ວຍພັນທະປ້ອງກັນຊາດ

ອີງຕາມມາດຕາ 40 ຂໍ້ 2 ຂອງລັດຖະທຳມະນູນ ແລະ ມາດຕາ 2 ຂໍ້ ທີ່ 2 ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ;

ພາຍຫລັງທີ່ໄດ້ພິຈາລະນາ, ອະພິປາຍຢ່າງກ້ວາງຂວາງ ແລະ ເລິກເຊິ່ງກ່ຽວກັບເນື້ອໃນກົດໝາຍວ່າດ້ວຍພັນທະປ້ອງກັນຊາດ; ກອງປະຊຸມເທື່ອທີ່ 6 ສະໄໝສາມັນຂອງສະພາແຫ່ງຊາດ ຊຸດທີ່ III ໃນວາລະກອງປະຊຸມຕອນບ່າຍວັນພຸດ, ວັນທີ 8 ມີນາ 1995.

ຕົກລົງ:

<u>ມາດຕາ 1</u>: ຮັບຮອງເອົາກົດໝາຍວ່າດ້ວຍພັນທະປ້ອງກັນຊາດ ໂດຍຄະແນນສຽງຢ່າງເປັນເອກະສັນ.

<u>ມາດຕາ 2</u>: ມະຕິຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ 8 ມີນາ 1995

ປະທານສະພາແຫ່ງຊາດ

ສະໝານ ວິຍະເກດ

สาທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເລກທີ 17 ສປປ

# ລັດຖະດຳລັດ

**ຂອງປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍພັນທະປ້ອງກັນຊາດ

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ V ມາດຕາ 53 ຂໍ້ 1;
- ອີງຕາມມະຕິຕົກລົງຂອງກອງປະຊຸມ ເທື່ອທີ່ 6 ສະໄໝສາມັນຂອງສະພາແຫ່ງຊາດຊຸດທີ່ III ກ່ຽວກັບການຮັບຮອງເອົາ ກົດໝາຍວ່າດ້ວຍພັນທະປ້ອງກັນຊາດ ສະບັບເລກທີ 02/ສພຊ ລົງວັນທີ 8 ມີນາ 1995.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ອອກລັດຖະດຳລັດ:**

<u>ມາດຕາ 1:</u> ປະກາດໃຊ້ກົດໝາຍວ່າດ້ວຍພັນທະປ້ອງກັນຊາດ.

<u>ມາດຕາ 2:</u> ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ 30 ມີນາ1995.
ປະທານປະເທດ
ໜູຮັກ ພູມສະຫວັນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------------------

ເລກທີ 02/90
ວຽງຈັນ, ວັນທີ 8 ມີນາ 1995

# ກົດໝາຍ ວ່າດ້ວຍພັນທະປ້ອງກັນຊາດ

ພາກທີ I ບົດບັນຍັດທົ່ວໄປ

### ມາດຕາ 1. ຈຸດປະສົງ

ກົດໝາຍວ່າດ້ວຍ ພັນທະປ້ອງກັນຊາດກຳນົດຫລັກການ, ລະບຽບການ, ນະໂຍບາຍ ແລະ ມາດຕະການຕ່າງໆກ່ຽວກັບພັນທະປ້ອງກັນຊາດ ແນໃສ່ປຸກລະດົມປະຊາຊົນບັນດາເຜົ່າປະກອບສ່ວນເຂົ້າໃນວຽກງານ ປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ເພື່ອເຮັດໃຫ້ກຳລັງປະກອບອາວຸດເຕີບໃຫຍ່ ເຂັ້ມແຂງຮອບດ້ານ ສາມາດປົກປັກຮັກສາປະເທດຊາດໄວ້ໄດ້ຢ່າງໝັ້ນຄົງ, ສ້າງເງື່ອນໄຂເພື່ອຮັບປະກັນໃຫ້ແກ່ ການພັດທະນາສ້າງສາປະເທດຊາດ.

### ມາດຕາ 2. ພັນທະປ້ອງກັນຊາດ

ພົນລະເມືອງລາວທຸກຄົນໂດຍບໍ່ຈຳແນກ ເຊື້ອຊາດ, ເຜົ່າຊົນ, ຖານະທາງດ້ານເສດຖະກິດ, ສັງຄົມ, ຄວາມເຊື່ອຖື, ລະດັບການສຶກສາ ແລະ ພູມລຳເນົາ ລ້ວນແຕ່ມີພັນທະ ເຂົ້າຮັບໃຊ້ໃນກຳລັງປ້ອງກັນຊາດຕາມທີ່ໄດ້ບົ່ງໄວ້ໃນມາດຕາ 36 ຂອງລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເວັ້ນເສຍແຕ່ຜູ້ທີ່ບໍ່ມີເງື່ອນໄຂຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້.

ການຈັດຕັ້ງປະຕິບັດພັນທະປ້ອງກັນຊາດຕ້ອງຮັບປະກັນການນຳພາຂອງພັກ.

## ພາກທີ II ພັນທະປ້ອງກັນຊາດໃນຍາມສະຫງົບ

**ໝວດທີ I ທະຫານພັນທະ**

### ມາດຕາ 3. ເງື່ອນໄຂການເປັນທະຫານພັນທະ

ພົນລະເມືອງລາວທຸກຄົນທີ່ເປັນຜູ້ຊາຍ ອາຍຸແຕ່ ສິບແປດປີ ຫາ ຊາວແປດປີ, ມີສຸຂະພາບສົມບູນຕ້ອງເຂົ້າຮັບໃຊ້ເປັນທະຫານພັນທະ. ສຳລັບຜູ້ຍິງ ອາຍຸແຕ່ ສິບແປດປີ ຫາ ຊາວສາມປີ ໃນກໍລະນີຕ້ອງການ ກໍອາດຈະຖືກຮຽກເຂົ້າຮັບໃຊ້ເປັນທະຫານພັນທະ.

### ມາດຕາ 4. ການຂຶ້ນບັນຊີ

ໃນແຕ່ລະປີ ນາຍບ້ານຕ້ອງເຮັດບັນຊີຜູ້ທີ່ມີອາຍຸ ສິບເຈັດປີເຕັມ ພາຍໃນບ້ານຂອງຕົນ ແລ້ວສົ່ງໃຫ້ກອງບັນຊາການທະຫານເມືອງ ເພື່ອກຽມເຂົ້າຮັບໃຊ້ເປັນທະຫານພັນທະ.

### ມາດຕາ 5. ການກຳນົດຈຳນວນພົນ

ກະຊວງປ້ອງກັນປະເທດ ເປັນຜູ້ກຳນົດຈຳນວນພົນ ທີ່ຈະເຂົ້າຮັບໃຊ້ເປັນທະຫານພັນທະ ໃນແຕ່ລະປີ.

### ມາດຕາ 6. ການສະເໜີຕົວ

ໃນແຕ່ລະປີ ກອງບັນຊາການທະຫານເມືອງ ຈະແຈ້ງໃຫ້ຜູ້ຊາຍທີ່ມີອາຍຸແຕ່ ສິບແປດປີຂຶ້ນໄປໃນວັນທີ 20 ມັງກອນ ທີ່ໄດ້ຂຶ້ນບັນຊີແລ້ວນັ້ນ ໄປສະເໜີຕົວຢູ່ກອງບັນຊາການທະຫານເມືອງພາຍໃນກຳ ນົດຢ່າງຊ້າບໍ່ໃຫ້ເກີນຊາວວັນ ນັບແຕ່ມື້ໄດ້ຮັບຊາບເປັນຕົ້ນໄປ.

ສຳລັບຜູ້ຍິງນັ້ນຖ້າຖືກຮຽກກໍ່ໃຫ້ໄປສະເໜີຕົວເຊັ່ນດຽວກັນ.

### ມາດຕາ 7. ການຄັດເລືອກເອົາທະຫານພັນທະ

ພາຍຫລັງກວດສຸຂະພາບແລ້ວ ຄະນະກຳມະການທະຫານພັນທະຂັ້ນເມືອງ ຈະເປັນຜູ້ຄັດເລືອກເອົາຜູ້ທີ່ມີສຸຂະພາບສົມບູນເຂົ້າເປັນທະຫານພັນທະຕາມຈຳນວນທີ່ທາງການໄດ້ກຳນົດໃຫ້ແຕ່ລະປີ.

ໃນການຄັດເລືອກນັ້ນໃຫ້ເອົາຜູ້ທີ່ມີອາຍຸສູງກ່ວາໄປກ່ອນ.

### ມາດຕາ 8. ເງື່ອນໄຂທີ່ພາໃຫ້ໂຈະການເປັນທະຫານພັນທະ

ຜູ້ທີ່ຈະຖືກໂຈະການເປັນທະຫານພັນທະຕ້ອງມີເງື່ອນໄຂໃດໜຶ່ງດັ່ງຕໍ່ໄປນີ້:

1. ຜູ້ທີ່ພວມພະຍາບານຕົວຢູ່ໂຮງໝໍ ຫລື ຢູ່ຄອບຄົວ;

2. ນັກຮຽນ, ນັກສຶກສາທີ່ຮຽນຢູ່ຊັ້ນປະຖົມ, ມັດທະຍົມ, ອຸດົມ, ມະຫາວິທະຍາ ໄລ ຫລື ຢູ່ໂຮງຮຽນວິຊາຊີບຊັ້ນຕົ້ນ, ຊັ້ນກາງ, ຊັ້ນສູງ ແລະ ນັກຄົ້ນຄວ້າເໜືອມະຫາວິທະຍາໄລ;

3. ຜູ້ມີອ້າຍ ຫລື ນ້ອງທີ່ຍັງບໍ່ທັນສຳເລັດໜ້າທີ່ເປັນທະຫານພັນທະ;

4. ຜູ້ທີ່ພວມຖືກດຳເນີນຄະດີອາຍາ ຫລື ປະຕິບັດໂທດຢູ່;

5. ຜູ້ທີ່ມີຄວາມຫຍຸ້ງຍາກເປັນພິເສດ ໂດຍມີການຢັ້ງຢືນຈາກອຳນາດການປົກຄອງເມືອງ.

ຜູ້ທີ່ຖືກໂຈະການເປັນທະຫານພັນທະ ຕາມເງື່ອນໄຂທີ່ໄດ້ກ່າວມາເທິງນີ້ ກໍຈະຕ້ອງໄດ້ເຂົ້າເປັນທະຫານພັນທະເມື່ອໃດເງື່ອນໄຂດັ່ງກ່າວຫາກໝົດໄປ.

### ມາດຕາ 9. ເງື່ອນໄຂທີ່ພາໃຫ້ຍົກເວັ້ນການເປັນທະຫານພັນທະ

ຜູ້ທີ່ຈະຖືກຍົກເວັ້ນການເປັນທະຫານພັນທະແມ່ນຜູ້ທີ່ຢູ່ໃນເງື່ອນໄຂໃດໜຶ່ງດັ່ງລຸ່ມນີ້ :

1. ເປັນຄົນເສຍຈິດ;

2. ເປັນຄົນເສຍອົງຄະແຕ່ປະເພດ 1 ຮອດປະເພດ 3;

3. ເປັນພະຍາດຫລວງ ຫລື ພະຍາດຮ້າຍແຮງອື່ນໆ;

4. ເປັນລູກຜູ້ດຽວໃນຄອບຄົວ ເວັ້ນເສັຍແຕ່ສະຫມັກໃຈ.

**ມາດຕາ 10. ກຳນົດເວລາເປັນທະຫານພັນທະ**

ກຳນົດເວລາເປັນທະຫານພັນທະແມ່ນສອງປີນັບແຕ່ມື້ກອງບັນຊາການທະຫານເມືອງ ຮັບເອົາເປັນຕົ້ນໄປ.

ສຳລັບຜູ້ທີ່ຫນີຈາກການເປັນທະຫານພັນທະນັ້ນ ບໍ່ໃຫ້ຄິດໄລ່ໄລຍະເວລາຫນີເຂົ້າໃນກຳນົດເວລາທີ່ກ່າວມາຂ້າງເທິງນີ້.

**ມາດຕາ 11. ມາດຕະຖານ ແລະ ຫນ້າທີ່ຂອງທະຫານພັນທະ**

ທະຫານພັນທະ ຕ້ອງມີມາດຕະຖານ ແລະ ປະຕິບັດຫນ້າທີ່ ຄືກັນກັບທະຫານປະຈຳການ.

**ມາດຕາ 12. ການລາພັກ**

ຖ້າມີຄວາມຈຳເປັນທະຫານພັນທະ ອາດຈະໄດ້ຮັບອະນຸຍາດໃຫ້ລາພັກໄດ້ໃນກຳນົດເວລາອັນເຫມາະສົມ.

**ມາດຕາ 13. ການສຳເລັດຫນ້າທີ່**

ທະຫານພັນທະ ທີ່ໄດ້ຮັບໃຊ້ຄົບຕາມກຳນົດເວລາທີ່ໄດ້ບົ່ງໄວ້ໃນມາດຕາ 10 ເທິງນີ້ ຖືວ່າໄດ້ສຳເລັດຫນ້າ ທີ່ການເປັນທະຫານພັນທະ.

ທະຫານພັນທະ ທີ່ໄດ້ຮັບໃຊ້ຍັງບໍ່ທັນຄົບຕາມກຳນົດເວລາ ອາດຈະໄດ້ຮັບອະນຸຍາດໃຫ້ອອກກ່ອນກໍໄດ້ ໃນກໍລະນີໃດຫນຶ່ງ ດັ່ງຕໍ່ໄປນີ້ :

1. ເງື່ອນໄຂສຸຂະພາບ ເຮັດໃຫ້ບໍ່ສາມາດຮັບໃຊ້ໃນກອງທັບຕໍ່ໄປໄດ້;

2. ມີຄວາມຈຳເປັນພິເສດ ໂດຍໄດ້ຮັບການຢັ້ງຢືນຈາກກອງບັນຊາການທະຫານເມືອງ ແລະອົງການທີ່ກ່ຽວຂ້ອງ.

**ມາດຕາ 14. ການສະຫມັກເປັນທະຫານປະຈຳການ**

ທະຫານພັນທະຜູ້ທີ່ສະຫມັກໃຈ ເປັນທະຫານປະຈຳການ ເພື່ອຮັບໃຊ້ໃນກອງທັບຕໍ່ໄປນັ້ນ ມີສິດສະເຫນີຈຸດປະສົງ ຕໍ່ຜູ້ບັນຊາການບ່ອນທີ່ຕົນສັງກັດຢູ່ຢ່າງຊ້າ ສາມເດືອນ ກ່ອນຈະຫມົດກຳນົດເວລາເປັນທະຫານພັນທະ.

**ມາດຕາ 15. ພັນທະຂອງຜູ້ທີ່ສຳເລັດຫນ້າທີ່ເປັນທະຫານພັນທະ**

ຜູ້ທີ່ສຳເລັດຫນ້າທີ່ເປັນທະຫານພັນທະ ຕ້ອງ:

1. ຮັກສາຄວາມລັບຂອງກອງທັບ;

2. ໄປສະເຫນີຕົວ ແລະຂຶ້ນບັນຊີ ເປັນກຳລັງສຳຮອງຢູ່ກອງບັນຊາການທະຫານເມືອງ ທີ່ຕົນຂຶ້ນກັບ ພາຍໃນກຳນົດ ຫນຶ່ງເດືອນ ນັບແຕ່ມື້ໄດ້ຮັບໃບອະນຸຍາດອອກທະຫານພັນທະເປັນຕົ້ນໄປ.

## ໝວດທີ II ກຳລັງສຳຮອງ

### ມາດຕາ 16. ກຳລັງສຳຮອງ

ກຳລັງສຳຮອງ ແມ່ນກຳລັງທີ່ປະຕິບັດໜ້າທີ່ ເປັນກອງໜູນໃຫ້ແກ່ກຳລັງປະກອບອາວຸດໃນເວລາທີ່ຈຳເປັນພ້ອມກັນນັ້ນກໍເປັນກຳລັງຫລັກແຫລ່ງ ແລະ ເປັນແບບຢ່າງໃນວຽກງານປ້ອງ ກັນຊາດ, ປ້ອງກັນຄວາມສະຫງົບຢູ່ທ້ອງຖິ່ນຂອງຕົນ.

ກຳລັງສຳຮອງ ປະກອບດ້ວຍຜູ້ທີ່ໄດ້ຜ່ານການເປັນທະຫານພັນທະ, ຜູ້ທີ່ອອກຈາກທະຫານປະຈຳການ, ຜູ້ທີ່ຍັງບໍ່ທັນໄດ້ຜ່ານການເປັນທະຫານພັນທະ ຫລື ທະຫານປະຈຳການ, ຊຶ່ງມີອາຍຸແຕ່ສິບແປດປີ ຫາ ຫ້າສິບປີ ແລະ ມີສຸຂະພາບແຂງແຮງ.

### ມາດຕາ 17. ປະເພດກຳລັງສຳຮອງ

ກຳລັງສຳຮອງ ແບ່ງເປັນ ສອງ ປະເພດ ຄື :

1. ປະເພດທີໜຶ່ງ ປະກອບດ້ວຍຜູ້ທີ່ໄດ້ຜ່ານການເປັນທະຫານພັນທະ ຫລື ທະຫານປະຈຳການ;

2. ປະເພດທີສອງ ປະກອບດ້ວຍຜູ້ທີ່ຍັງບໍ່ທັນໄດ້ຜ່ານການເປັນທະຫານພັນທະ ຫລື ທະຫານປະຈຳການ.

### ມາດຕາ 18. ການຝຶກແອບກຳລັງສຳຮອງ

ກຳລັງສຳຮອງຕ້ອງໄດ້ຝຶກແອບວິຊາທະຫານ ດັ່ງນີ້:

1. ສຳລັບຜູ້ທີ່ໄດ້ຜ່ານວິຊາທະຫານແລ້ວ ໃຫ້ມີການຝຶກຊ້ອມວິຊາທະຫານຄືນໃຫມ່ແຕ່ລະປີ;

2. ຜູ້ທີ່ຍັງບໍ່ທັນໄດ້ຮັບການຝຶກແອບວິຊາທະຫານນັ້ນ ໃຫ້ຝຶກແອບຢູ່ຕາມໂຮງຮຽນ, ສະຖາບັນການສຶກສາ, ສຳນັກງານ, ອົງການ, ໂຮງຈັກ, ໂຮງງານ ບ່ອນທີ່ຕົນສັງກັດຢູ່ຫລືຢູ່ກອງບັນຊາການທະຫານເມືອງ .

### ມາດຕາ 19. ຫນ້າທີ່ຂອງກຳລັງສຳຮອງ

ກຳລັງສຳຮອງ ມີຫນ້າທີ່ດັ່ງນີ້ :

1. ປະກອບສ່ວນຢ່າງຕັ້ງຫນ້າ ເຂົ້າໃນວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບຢູ່ທ້ອງຖິ່ນຂອງຕົນ, ເປັນແບບຢ່າງໃນການປະຕິບັດລະບຽບກົດຫມາຍ, ກໍ່ສ້າງເສດຖະກິດ-ສັງຄົມ ແລະແກ້ໄຂຊີວິດການເປັນຢູ່ໃນທ້ອງຖິ່ນທີ່ຕົນຕັ້ງພູມລຳເນົາຢູ່;

2. ກຽມພ້ອມປະຕິບັດຄຳສັ່ງລະດົມພົນ.

## ໝວດທີ III ກອງຫລອນ

### ມາດຕາ 20. ກອງຫລອນ

ກອງຫລອນ ແມ່ນກຳລັງເຄິ່ງປະກອບອາວຸດຂອງປະຊາຊົນ ຊຶ່ງຕິດພັນກັບການຜະລິດ, ປະຕິບັດໜ້າທີ່ປ້ອງກັນຊາດ, ປ້ອງກັນຄວາມສະຫງົບຢູ່ຮາກຖານ, ຂຶ້ນກັບອຳນາດການປົກຄອງຂັ້ນບ້ານ ແລະຂັ້ນເທິງຂອງ ຕົນຕາມສາຍຕັ້ງ.

### ມາດຕາ 21. ມາດຕະຖານ ແລະ ໜ້າທີ່ຂອງກອງຫລອນ

ມາດຕະຖານ ແລະ ໜ້າທີ່ຂອງກອງຫລອນ ມີດັ່ງນີ້ :

1. ບໍລິສຸດຕໍ່ຊາດ, ຕໍ່ປະຊາຊົນ ແລະ ຕໍ່ລະບອບປະຊາທິປະໄຕປະຊາຊົນ;

2.ມີທັດສະນະຫລັກໝັ້ນມິດ-ສັດຕູຈະແຈ້ງ;

3. ເປັນແບບຢ່າງໃນການປະຕິບັດແນວທາງນະໂຍບາຍຂອງພັກ, ເຄົາລົບ ແລະ ປະຕິບັດລະບຽບກົດໝາຍຂອງລັດ;

4. ປົກປັກຮັກສາປະເທດຊາດ ແລະ ໝາກຜົນຂອງການປະຕິວັດ, ປົກປັກຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມຢູ່ຮາກຖານ;

5. ຍົກສູງສະຕິລະວັງຕົວ ຕ້ານທຸກກົນອຸບາຍທຳລາຍມ້າງເພຂອງສັດຕູ, ກຽມພ້ອມສູ້ຮົບ ແລະ ສູ້ຮົບຢ່າງພິລະອາດຫານ, ສະກັດກັ້ນທຸກການກະທຳຜິດຕໍ່ລະບຽບກົດໝາຍ;

6. ເຂົ້າຮ່ວມ ແລະເປັນແບບຢ່າງໃນການຜະລິດ, ສ້າງເສດຖະກິດ, ແກ້ໄຂຊີວິດການເປັນຢູ່ ແລະ ກໍ່ສ້າງຮາກຖານໃຫ້ເຂັ້ມແຂງ;

7. ຕັ້ງໜ້າຝຶກຝົນຫລໍ່ຫລອມຕົນເອງ, ຮໍ່າຮຽນການເມືອງ, ວັດທະນະທຳ, ການທະຫານ ແລະ ລະບຽບກົດໝາຍ.

## ໝວດທີ IV ກຳລັງປ້ອງກັນຕົວ

### ມາດຕາ 22. ກຳລັງປ້ອງກັນຕົວ

ກຳລັງປ້ອງກັນຕົວ ແມ່ນກຳລັງເຄິ່ງປະກອບອາວຸດທີ່ຈັດຕັ້ງຂຶ້ນ ຢູ່ຕາມສຳນັກງານ, ອົງການ, ໂຮງຈັກ, ໂຮງງານ ມີໜ້າທີ່ຮັບປະກັນຄວາມປອດໄພ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ ໃນຂອບເຂດສຳນັກງານ, ອົງການ, ໂຮງຈັກ,ໂຮງງານຂອງຕົນ.

ກຳລັງປ້ອງກັນຕົວຂອງສຳນັກງານ, ອົງການຂັ້ນສູນກາງຂຶ້ນກັບກະຊວງພາຍໃນ.

ສ່ວນກຳລັງປ້ອງກັນຕົວຂອງສຳນັກງານ, ອົງການ, ໂຮງຈັກ, ໂຮງງານຢູ່ທ້ອງຖິ່ນແມ່ນຂຶ້ນ ກັບກອງບັນຊາການ ປກສ ແຂວງ ຫລື ກອງບັນຊາການ ປກສ ເມືອງ.

### ມາດຕາ 23. ມາດຕະຖານ ແລະ ໜ້າທີ່ຂອງກຳລັງປ້ອງກັນຕົວ

ມາດຕະຖານ ແລະ ໜ້າທີ່ຂອງກຳລັງປ້ອງກັນຕົວ ແມ່ນປະຕິບັດຄ້າຍຄືກັນກັບມາດຕະຖານ ແລະ ໜ້າທີ່ຂອງກອງຫລອນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 21 ເທິງນີ້.

## ພາກທີ III ການລະດົມພົນໃນຍາມສຸກເສີນ

### ມາດຕາ 24. ການລະດົມພົນ

ເມື່ອມີໄພຂົ່ມຂູ່ ແລະ ມີການຕົກລົງລະດົມພົນທົ່ວໄປ ຫລືເປັນພາກສ່ວນຈາກປະທານປະເທດ ແລ້ວ ລັດຖະມົນຕີວ່າການກະຊວງປ້ອງກັນປະເທດ ມີຫນ້າທີ່ຈັດຕັ້ງປະຕິບັດການລະດົມພົນ.

ທະຫານປະຈຳການ, ທະຫານພັນທະ ຕ້ອງເຂົ້າປະຈຳການ ແລະ ກຽມພ້ອມປະຕິບັດທຸກຄຳສັ່ງ ແລະ ພາກສ່ວນທີ່ລາພັກນັ້ນກໍ ຕ້ອງກັບຄືນກົມກອງໃນທັນໃດ.

ກຳລັງສຳຮອງ ຕ້ອງເຂົ້າສູນເຕົ້າໂຮມ ເພື່ອປະຕິບັດຫນ້າທີ່ເປັນກອງຫນູນ. ກຳລັງປ້ອງກັນຕົວຕ້ອງເຂົ້າປະຈຳການ ຕາມກົມກອງທ້ອງຖິ່ນໃຜລາວ ແລະ ກຽມພ້ອມປະຕິບັດທຸກຄຳສັ່ງ.

ອຳນາດການປົກຄອງ, ສຳນັກງານ, ອົງການ, ອົງການຈັດຕັ້ງມະຫາຊົນ ແລະສັງຄົມ ຕ້ອງເບິ່ງແຍງຊ່ວຍເຫລືອຄອບຄົວຂອງຜູ້ທີ່ຖືກລະດົມໄປປະຕິບັດຫນ້າທີ່ຂອງຊາດ.

### ມາດຕາ 25. ການລະດົມພາຫະນະ ແລະ ວັດຖຸປັດໃຈ

ພ້ອມກັນກັບການລະດົມພົນ ກໍອາດຈະມີການລະດົມພາຫະນະ, ວັດຖຸປັດໃຈ ຈາກການຈັດຕັ້ງຂອງລັດ, ລວມຫມູ່, ຂອງເອກະຊົນ ແລະ ປະຊາຊົນ. ທຸກພາກສ່ວນທີ່ຖືກລະດົມນັ້ນ ມີພັນທະປະກອບສ່ວນຢ່າງຕັ້ງຫນ້າ.

### ມາດຕາ 26. ການສິ້ນສຸດການລະດົມພົນ

ເມື່ອສະພາບການກັບຄືນສູ່ຄວາມເປັນປົກກະຕິ ແລະໄດ້ມີແຈ້ງການຢ່າງເປັນທາງການແລ້ວການລະດົມພົນກໍຖືວ່າໄດ້ສິ້ນສຸດລົງ. ສຳລັບກຳລັງທີ່ຖືກລະດົມນັ້ນ ກໍໃຫ້ຈັດສົ່ງຄືນກົມກອງ, ທ້ອງຖິ່ນເດີມ; ສ່ວນພາຫະນະ ແລະ ອຸປະກອນທີ່ຖືກລະດົມ ກໍໃຫ້ຈັດສົ່ງຄືນເຈົ້າຂອງເດີມ ຕາມເງື່ອນໄຂຕົວຈິງ ຢ່າງເປັນລາຍລັກອັກສອນ.

## ພາກທີ IV ນະໂຍບາຍ

### ມາດຕາ 27. ນະໂຍບາຍຕໍ່ທະຫານພັນທະໃນເວລາປະຕິບັດຫນ້າທີ່

ນະໂຍບາຍຕໍ່ທະຫານພັນທະໃນເວລາປະຕິບັດຫນ້າທີ່ມີດັ່ງນີ້ :

1. ໄດ້ຮັບການຍົກລະດັບທາງດ້ານການເມືອງ,ວັດທະນະທຳ,ວິຊາສະເພາະແລະວິຊາຊີບ;

2. ໄດ້ຮັບເງິນເດືອນ ແລະ ນະໂຍບາຍຕ່າງໆ ຄືກັນກັບພົນທະຫານປະຈຳການຊັ້ນສອງ;

3. ສຳລັບພະນັກງານ, ລັດຖະກອນທີ່ໄປຮັບໃຊ້ເປັນທະຫານພັນທະນັ້ນ ມີສິດໄດ້ຮັບເງິນເດືອນຕາມຊັ້ນ ແລະ ຂັ້ນຂອງຕົນ ກ່ອນເປັນທະຫານພັນທະ ແລະ ໃນເວລາເຈັບເປັນ, ເສຍອົງຄະ ຫລືເສຍຊີວິດ ກໍຈະໄດ້ຮັບນະໂຍບາຍ ຕາມລະບອບອຸດຫນູນຂອງພະນັກງານ, ລັດຖະກອນ;

4. ໄດ້ຮັບການຍ້ອງຍໍ ຕາມລະບອບນະໂຍບາຍ;

5. ໄດ້ຮັບການເອົາໃຈໃສ່ ໃນການເບິ່ງແຍງຄອບຄົວຈາກອຳນາດການປົກຄອງທ້ອງຖິ່ນ, ການຈັດຕັ້ງ ແລະປະຊາຊົນໃນເວລາຕົນໄປປະຕິບັດຫນ້າທີ່;

6. ເມື່ອທະຫານພັນທະຫາກຖືກບາດເຈັບ, ເສຍຊີວິດ ຫລືຫາຍສາບສູນ ຕ້ອງແຈ້ງໃຫ້ຄອບຄົວຊາບຢ່າງເປັນລາຍລັກອັກສອນ ຢ່າງຊ້າບໍ່ໃຫ້ກາຍສາມເດືອນ ພ້ອມທັງສິ່ງວັດຖຸສິ່ງຂອງຂອງຜູ້ກ່ຽວໃຫ້ຄອບຄົວຢ່າງຄົບຖ້ວນ.

ໃນກໍລະນີເສຍຊີວິດກໍຈະໄດ້ສິ່ງອັດຖິໃຫ້ຄອບຄົວຕາມຄວາມປະສົງ.

## ມາດຕາ 28. ນະໂຍບາຍຕໍ່ຜູ້ສໍາເລັດຫນ້າທີ່ເປັນທະຫານພັນທະ

ຜູ້ທີ່ໄດ້ສໍາເລັດຫນ້າທີ່ເປັນທະຫານພັນທະແລ້ວ ຈະໄດ້ຮັບນະໂຍບາຍດັ່ງນີ້ :

1. ໄດ້ຮັບບຸລິມະສິດໃນການສຶກສາຮໍ່າຮຽນຕໍ່ ຫລື ໄດ້ຮັບວຽກເຮັດງານທໍາ ຕາມເງື່ອນໄຂຕົວຈິງ;

2. ສໍາລັບພະນັກງານ, ລັດຖະກອນ ໄລຍະເວລາທີ່ຮັບໃຊ້ຢູ່ໃນກອງທັບນັ້ນ ຈະໄດ້ໄລ່ເຂົ້າໃນປີການ ແລະເວລາເລື່ອນຂັ້ນຈະໄດ້ເພີ່ມຂັ້ນຕື່ມອີກຂັ້ນຫນຶ່ງ ພ້ອມທັງຈະຖືກຮັບເຂົ້າຢູ່ກົມ ກອງເກົ່າ ຫລືຢູ່ບ່ອນໃຫມ່ຕາມຄວາມເຫມາະສົມ;

3. ໄດ້ຮັບເງິນອຸດຫນູນເທົ່າກັບເງິນເດືອນຂອງຕົນ ສາມ ເດືອນ ແລະ ເງິນໃຊ້ຈ່າຍຄ່າເດີນທາງກັບຄືນກົມກອງ, ທ້ອງຖິ່ນ ພ້ອມດ້ວຍເຄື່ອງນຸ່ງຕື່ມອີກ ຫນຶ່ງ ຊຸດ.

## ມາດຕາ 29. ນະໂຍບາຍຕໍ່ກອງຫລອນ ແລະ ກໍາລັງປ້ອງກັນຕົວ

ໃນເວລາປະຕິບັດຫນ້າທີ່ຂອງຕົນນັ້ນ ກອງຫລອນ ແລະ ກໍາລັງປ້ອງກັນຕົວຈະໄດ້ຮັບນະໂຍບາຍດັ່ງຕໍ່ໄປນີ້:

1. ໄດ້ຮັບການຍົກລະດັບທາງດ້ານການເມືອງ, ວັດທະນະທໍາ ແລະ ວິຊາສະເພາະ;

2. ໃນເວລາອອກເຄື່ອນໄຫວສູ້ຮົບ ຈະໄດ້ຮັບເງິນອຸດຫນູນ ຕາມຊັ້ນຂອງຕົນ;

3. ໃນກໍລະນີອອກໄປປະຕິບັດວຽກງານ ແລະ ຖືກບາດເຈັບ, ເສຍອົງຄະ ຫລື ເສຍສະລະ ຈະໄດ້ຮັບການປິ່ນປົວ ແລະ ນະໂຍບາຍຄືກັນກັບທະຫານປະຈໍາການ. ສໍາລັບກໍາລັງປ້ອງກັນຕົວນັ້ນ ໃຫ້ປະຕິບັດນະໂຍບາຍ ຕາມກົດຫມາຍແຮງງານ ແລະ ລະບອບປະກັນສັງຄົມຕໍ່ພະນັກງານ, ລັດຖະກອນ;

4. ໄດ້ຮັບເຄື່ອງນຸ່ງຫົ່ມ ໃນເວລາປະຕິບັດຫນ້າທີ່ຢູ່ແນວຫນ້າ;

5. ໄດ້ຮັບການຍ້ອງຍໍຕາມລະບອບນະໂຍບາຍ;

6. ໄດ້ຮັບການເອົາໃຈໃສ່ໃນການເບິ່ງແຍງຄອບຄົວ ຈາກອໍານາດການປົກຄອງທ້ອງຖິ່ນ, ການຈັດຕັ້ງ ແລະ ປະຊາຊົນໃນເວລາຕົນໄປປະຕິບັດຫນ້າທີ່.

## ມາດຕາ 30. ນະໂຍບາຍຕໍ່ກໍາລັງທີ່ຖືກລະດົມ

ບຸກຄົນໃດ ທີ່ບໍ່ໄດ້ກ່າວໄວ້ໃນມາດຕາ 27 ແລະ 29 ເທິງນີ້ ຫາກໄດ້ຖືກລະດົມເຂົ້າຮັບໃຊ້ໃນຍາມສຸກເສີນ ກໍຈະໄດ້ຮັບນະໂຍບາຍເຫມືອນກັນກັບທະຫານປະຈໍາການ.

ສໍາລັບຜູ້ທີ່ໄດ້ປະກອບສ່ວນ ທາງດ້ານພາຫະນະ, ວັດຖຸປັດໃຈ ໃນເວລາສຸກເສີນ ກໍຈະໄດ້ຮັບນະໂຍບາຍ, ຍ້ອງຍໍ, ຊົມເຊີຍຕາມຜົນງານຕົວຈິງ .

### ພາກທີ V ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 31. ການຫລົບຫລີກຈາກທະຫານພັນທະ**

ບຸກຄົນໃດ ຫາກບໍ່ໄປສະເຫນີຕົວຕາມການແຈ້ງການ ຫລືຖືກຄັດເລືອກໄດ້ແລ້ວ ຫາກບໍ່ໄປເປັນທະຫານພັນທະຈະຖືກສຶກສາອົບຮົມໃຫ້ປະຕິບັດ. ຖ້າບໍ່ປະຕິບັດຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມ ເດືອນ ຫາ ຫນຶ່ງປີ.

ໃນຍາມສົງຄາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສອງປີ.

**ມາດຕາ 32. ການຊຸກເຊື່ອງ ຫລື ປິດບັງ**

ບຸກຄົນໃດ ໄດ້ຂັດຂວາງ, ຊຸກເຊື່ອງ ຫລື ປິດບັງບໍ່ໃຫ້ບຸກຄົນອື່ນໄປເປັນທະຫານພັນທະ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມເດືອນຫາ ຫນຶ່ງປີ.

ໃນຍາມສົງຄາມ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫົກເດືອນ ຫາ ສອງປີ.

**ມາດຕາ 33. ການຫນີຈາກການເປັນທະຫານພັນທະ**

ບຸກຄົນໃດ ທີ່ເປັນທະຫານພັນທະ ຫາກໄດ້ຫນີຈາກກົມກອງ ກ່ອນຫມົດກຳນົດເວລາເປັນທະຫານພັນທະ ໃຫ້ອຳນາດການປົກຄອງສຶກສາອົບຮົມຜູ້ກ່ຽວ ໃຫ້ກັບຄືນກົມກອງເດີມ. ຖ້າຫາກ ຜູ້ກ່ຽວບໍ່ຍອມກັບຄືນ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫົກເດືອນ ຫາ ຫນຶ່ງປີ.

ໃນຍາມສົງຄາມ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫນຶ່ງປີ ຫາ ສອງປີ.

### ພາກທີ VI ບົດບັນຍັດສຸດທ້າຍ

**ມາດຕາ 34. ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດຫມາຍສະບັບນີ້ .

**ມາດຕາ 35. ຜົນສັກສິດ**

ກົດຫມາຍສະບັບນີ້ ມີຜົນສັກສິດນັບແຕ່ມື້ປະທານປະເທດແຫ່ງ ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ເປັນຕົ້ນໄປ. ຂໍ້ກຳນົດ, ບົດບັນຍັດໃດທີ່ຂັດກັບກົດຫມາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ສະໝານ ວິຍະເກດ